

## ຂ້ອຍຈະສາມາດໄດ້ຮາຍຣະອຽດເພີ້ມເຕີມຢູ່ໃສ?

www.dshs.wa.gov/altsa/aps

ຕິດຕໍ່ຫາ APS ສຳລັບລາຍງານກ່ຽວກັບການກ່າວຫາເຣື່ອງການກົດ ຂີ່ຂົ່ມເຫັງ, ການປະຖິ້ມ, ການບໍ່ຫົວຊານຳ, ການບໍ່ສົນໃຈນຳຕົນເອງ ແລະ ການສະແວງຫາຜົນປະໂຍດທາງການເງິນນຳຜູ້ໃຫຍ່ອ່ອນແອຢູ່ໃນອັນຕະຣາຍໄດ້ງ່າຍໆຜູ້ທີ່ອາສັຍຢູ່ໃນຊຸມນຸມຊົນ ແລະ ສະຖາບັນ ປິ່ນປົວ.

**ຖ້າຫາກວ່າທ່ານຄິດວ່າຄົນໃດຄົນນຶ່ງອາດຈະຕົກຢູ່ໃນອັນຕະຣາຍທີ່ໃກ້ຈະເກີດຂື້ນ ຫລື ຕ້ອງການຄວາມຊ່ວຍເຫລືອຮີບດ່ວນ,**

**ຈົ່ງໂທຫາ 911 ໂດຍທັນທີໂລດ!**

ການລາຍງານທາງອອນລາຍນ໌ແມ່ນເຂົ້າເຖິງໄດ້ ແລະ ມີໄວ້ໃຫ້ຕະລອດ 24 ຊົ່ວໂມງຕໍ່ມື້ ແລະ ສາຍໂທເຂົ້າຂອງ APS ແມ່ນມີໄວ້ໃຫ້ແຕ່ ວັນຈັນ - ວັນສຸກ 8:00 a.m. – 5:00 p.m. ທີ່ມີຄວາມສາມາດທີ່ຈະສົ່ງຄວາມໄວ້ກ່ອນ ແລະ ຫລັງຈາກໂມງເຮັດການ. ກະຣຸນາຕິດຕໍ່ຫາເຂດທີ່ຜູ້ເຄາະຮ້າຍອາສັຍຢູ່.

**ສຳລັບການລາຍງານທາງອອນລາຍນ**

www.dshs.wa.gov/altsa/reportadultabuse

**ເລກໂທຣະສັບຈົດຊື່ເຂົ້າສູນກາງ**

**1-877-734-6277**

**TTY: 1-833-866-5595**

Washington State Department of Social & Health Services

*Transforming lives*

DSHS 22-810 LA (Rev. 11/20)

# ພະແນກປ້ອງກັນຜູ້ໃຫຍ່




Washington State Department of Social and Health Services

*Aging and Long-Term Support Administration*

## ພະແນກປ້ອງກັນຜູ້ໃຫຍ່ເຮັດຫຍັງແດ່?

ຄວາມຮັບຜິດຊອບຂັ້ນທຳອິດຂອງພະແນກປ້ອງກັນຜູ້ໃຫຍ່ (APS) ແມ່ນທີ່ຈະຮັບເອົາ ແລະ ສືບສວນການກ່າວຫາໃນເຣື່ອງການກົດຂີ່ຂົ່ມເຫັງ (ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ແລະ ການສະແວງຫາ ຜົນປະໂຍດທາງການເງິນ, ແລະ ການບໍ່ສົນໃຈນຳຕົນເອງຂອງຜູ້ໃຫຍ່ອ່ອນແອຢູ່ໃນອັນຕະຣາຍໄດ້ງ່າຍໆຜູ້ທີ່ອາສັຍຢູ່ໃນເຮືອນຂອງຕົນເອງແລະ ຢູ່ໃນສະຖານທີ່ປິ່ນປົວ.

ການຮັບເອົາຄວາມຊ່ວຍເຫລືອຈາກກົມ DSHS ແມ່ນທາງເລືອກຂອງ ບຸກຄົນ. ຜູ້ໃຫຍ່ອ່ອນແອຢູ່ໃນອັນຕະຣາຍໄດ້ງ່າຍໆຕ້ອງອະນຸຍາດໃນການບໍຣິການ ແລະ ຖືກແຈ້ງບອກກ່ຽວກັບສິດທິທີ່ຈະຮັບເອົາ ຫລື ປະຕິ ເສດການບໍຣິການ. ກົມ DSHS ບໍ່ສາມາດທີ່ຈະເອົາຜູ້ໃຫຍ່ອອກຈາກບ່ອນຢູ່ອາສັຍຂອງເຂົາເຈົ້າ ຫລື ເອົາເຂົາເຈົ້າໃສ່ໃນບ່ອນຢູ່ອາສັຍບ່ອນຕ່າງທີ່ຂັດຕໍ່ຄວາມປະສົງຂອງເຂົາເຈົ້າ.

### ການກົດຂີ່ຂົ່ມເຫັງແມ່ນຫຍັງ?

ການກົດ ຂີ່ຂົ່ມເຫັງອາດຈະລວມເອົາການກະທຳໂດຍເຈດຕະນາຫລືຢ່າງບໍ່ຫົວຊານຳທີ່ກໍ່ໃຫ້ເກີດມີຫລືການນຳພາໄປສູ່ການບາດເຈັບ. ການ ກົດຂີ່ຂົ່ມເຫັງສາມາດເກີດຂື້ນໄດ້ຢູ່ທຸກໆບ່ອນ ແລະ ສາມາດເກີດຂື້ນໄດ້ ນຳທຸກໆຄົນ. ຜູ້ຊາຍແລະຜູ້ຍິງຈາກທຸກໆຊົນເຜົ່າ,ສັງຄົມ,ແລະເບື້ອງຫລັງສະພາບເສດຖະກິດສາມາດຖືກເຄາະຮ້າຍໄດ້. ***ຜູ້ທີ່ກະທຳຜິດສາມາດເປັນຄົນແປກຫນ້າ, ຜູ້ເບິ່ງແຍງດູແລ, ສະມາຊິກຄອບຄົວ, ຫມູ່ ເພື່ອນ, ຫລື ຄົນອື່ນໆ.***

### ຊະນິດຂອງການກົດຂີ່ຂົ່ມເຫັງບາງຢ່າງແມ່ນຫຍັງແດ່?

- ການປະຖິ້ມ
- ການສະແວງຫາ ຜົນປະໂຍດທາງການເງິນ
- ການໃຊ້ໄປໃນທາງຜິດໃນເຄື່ອງຄວບຄຸມທາງເຄມີ/ຮ່າງກາຍ/ເຄື່ອງຈັກ
- ການບໍ່ຫົວຊານຳ
- ທາງດ້ານຮ່າງກາຍ
- ການ ບໍ່ສົນໃຈນຳຕົນເອງ
- ທາງເພດ
- ທາງປາກເປົ່າ/ທາງດ້ານຈິດໃຈ/ທາງດ້ານຄວາມຮູ້ສຶກ

*ທຸກໆຄົນມີຄວາມຮັບຜິດຊອບຮ່ວມກັນໃນການຫລີກເວັ້ນ ແລະ ການລາຍງານການກົດຂີ່ຂົ່ມເຫັງໃສ່ຜູ້ໃຫຍ່ອ່ອນແອຢູ່ໃນອັນຕະຣາຍໄດ້ງ່າຍໆຢູ່ໃນຣັດວໍຊິງຕັນ*

## ແມ່ນໃຜຈະຖືກຖືວ່າເປັນຜູ້ໃຫຍ່ອ່ອນແອຢູ່ໃນອັນຕະລາຍໄດ້ງ່າຍໆ?

ຜູ້ໃຫຍ່ທີ່ມີອາຍຸ 60 ປີ ຫລື ແກ່ກວ່າຜູ້ທີ່ມີຄວາມບໍ່ສາມາດທາງດ້ານການທຳງານ, ຈິດໃຈ, ຫລື ຮ່າງກາຍທີ່ຈະບົວຣະບັດເບິ່ງແຍງຕົນເອງຈະຖືກຖືວ່າເປັນ ຜູ້ໃຫຍ່ອ່ອນແອຢູ່ໃນອັນຕະລາຍໄດ້ງ່າຍໆ. ຜູ້ໃຫຍ່ຄົນອື່ນໆທີ່ຖືກຖືວ່າອ່ອນແອຢູ່ໃນອັນຕະລາຍໄດ້ງ່າຍໆແມ່ນມີອາຍຸ 18 ປີ ຫລື ແກ່ກວ່າ ແລະ:

- ມີຜູ້ປົກຄອງຕາມກົດຫມາຍ
- ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ
- ເຂົ້ານອນຢູ່ໃນສະຖາບັນປິ່ນປົວບ່ອນໃດບ່ອນນຶ່ງ.
- ໄດ້ຮັບການບໍຣິການຢູ່ໃນເຮືອນຜ່ານຫ້ອງການສຸຂະພາບຢູ່ເຮືອນທີ່ມີໃບອະນຸຍາດ, ເບິ່ງແຍງຄົນໃກ້ຈະເສັຽຊີວິດ, ຫລື ການເບິ່ງແຍງດູແລ ຢູ່ເຮືອນ,
- ໄດ້ຮັບການບໍຣິການຈາກຜູ້ບໍຣິການສ່ວນບຸກຄົນ.
- ມີຜູ້ຊ່ວຍສ່ວນຕົວຜູ້ທີ່ທຳການເບິ່ງແຍງບົວຣະບັດພາຍໃຕ້ຄຳຊີ້ນຳຂອງເຂົາເຈົ້າເອງເພື່ອຄ່າທົດແທນ.

## ສິ່ງເຕືອນບອກການກົດຂີ່ຂົ່ມເຫັງຜູ້ໃຫຍ່ບາງຢ່າງມີແນວໃດແດ່?

ສິ່ງເຕືອນບອກອາດຈະລວມເອົາສິ່ງຊີ້ບອກໃນການປະພຶດແລະທາງດ້ານຮ່າງກາຍຫລາຍຢ່າງຫລາຍແນວຊຶ່ງສາມາດເປັນທີ່ແຈ່ມແຈ້ງ ຫລື ເປັນລາງຫນ້ອຍນຶ່ງ *ຖ້າຫາກວ່າທ່ານສົງສັຍວ່າມີການກົດຂີ່ຂົ່ມເຫັງຈົ່ງລາຍງານມັນ.*

| ສິ່ງເຕືອນບອກການກົດຂີ່ຂົ່ມເຫັງຜູ້ໃຫຍ່ເປັນທີ່ແຈ່ມແຈ້ງ | ສິ່ງເຕືອນບອກການກົດຂີ່ຂົ່ມເຫັງຜູ້ໃຫຍ່ເປັນລາງຫນ້ອຍນຶ່ງ |
|---|---|
| **ການບາດເຈັບ**<br>ຮອຍບວບຊ້ຳ, ບາດແຜ, ຫລື ການລຸດນ້ຳຫນັກທີ່ນ່າສົງສັຍ ຫລື ອະທິບາຍ ໄດ້ຍາກ | **ການແຍກຕົວອອກຢູ່ໂດດດ່ຽວ**<br>ບຸກຄົນຖືກເກັບຮັກສາໃຫ້ຢູ່ໄກຈາກ ຫລື ບໍ່ຢູ່ໃນກິຈກັມຕາມປົກກະຕິນຳຄອບຄົວ, ຫມູ່ເພື່ອນ, ຫລື ເຫດການສັງຄົມ. |
| **ການປະພຶດ ຫລື ຄວາມຮູ້ສຶກ**<br>ການປ່ຽນແປງໃນບຸກຄະລິກລັກສະນະ | **ຫມາຍນັດພົບທີ່ບໍ່ມາ ຫລື ຍົກເລີກ**<br>ຫມາຍນັດພົບປົກກະຕິ, ເຊັ່ນວ່າຫມາຍນັດພະຍາບານ ຫລື ນຳຜູ້ຊ່ຽວ ຊານ, ໄດ້ຖືກຢຸດໂດຍປາສຈາກການຕິດຕໍ່ມາຫາ. |
| **ຄວາມຕ້ອງການໃນການດຳຣົງຊີວິດປະຈຳວັນ**<br>ການບໍ່ຫົວຊານຳ ຫລື ການບໍ່ໃຫ້ຄວາມສົນໃຈຕໍ່ອະນາມັຍຄວາມສະ ອາດ, ເຄື່ອງນຸ່ງ, ຢາ, ອາຫານ, ຫລື ເຮືອນ. | **ການປາກົດຕົວທັນທີທັນໃດຂອງບຸກຄົນທີ່ບໍ່ຮູ້ຈັກ ຫລື ຍາດພີ່ນ້ອງຜູ້ທີ່ບໍ່ໄດ້ກ່ຽວຂ້ອງນຳໃນຜ່ານມາ**<br>ບຸກຄົນໃຫມ່ກາຍເປັນກ່ຽວຂ້ອງນຳ ແລະ ກຳຕໍ່ເຣື່ອງສ່ວນຕົວແລະການເງິນ. |
| **ຊັບສິນ ແລະ ການເງິນ**<br>ການປ່ຽນແປງທາງດ້ານການເງິນທີ່ອະທິບາຍບໍ່ໄດ້ ຫລື ການສູນເສັຽໄປໃນເງິນ ແລະ ຂອງສ່ວນຕົວ. | **ການແກ້ຕົວ ຫລື ການອະທິບາຍທີ່ບໍ່ມີເຫດມີຜົນ**<br>ການອະທິບາຍກ່ຽວກັບສິ່ງຊີ້ບອກໃນການປະພຶດ ຫລື ທາງຮ່າງກາຍຂອງ ບຸກຄົນ ຫລື ຜູ້ເບິ່ງແຍງດູແລເວົ້າບໍ່ເຂົ້າເຣື່ອງ. |
| **ການບຸກລຸກທາງປາກເປົ່າ**<br>ຄວາມເຫັນ ຫລື ຄຳເວົ້າທີ່ຂົ່ມຂູ່, ຂູ່ເຂັນ, ຫລື ເສື່ອມເສັຽ. | |

## ແມ່ນຫຍັງຈະເກີດຂຶ້ນເມື່ອເວລາລາຍງານຫາພະແນກປ້ອງກັນຜູ້ໃຫຍ່ໄດ້ຖືກເຮັດ?

**ເມື່ອເວລາທ່ານລາຍງານ, ທ່ານຈະຖືກຖາມກ່ຽວກັບ:**

- ຊື່ ແລະ ຣາຍຣະອຽດການຕິດຕໍ່ຫາຂອງທ່ານ
- ຊື່ ແລະ ຣາຍຣະອຽດການຕິດຕໍ່ຫາຂອງຜູ້ໃຫຍ່ອ່ອນແອຢູ່ໃນອັນຕະລາຍໄດ້ງ່າຍໆ ແລະ ບຸກຄົນທີ່ທ່ານຄິດວ່າໄດ້ກໍ່ໃຫ້ເກີດມີອັນຕະລາຍ.
- ທີ່ຈະແລກປ່ຽນສິ່ງທີ່ທ່ານຮູ້ຈັກກ່ຽວກັບສະຖານະການ, ການບັນຣະ ຍາຍຂອງຄວາມຫ່ວງໃຍ ຫລື ສິ່ງທີ່ກຳລັງຈະເກີດຂຶ້ນ ຫລື ແມ່ນຫຍັງໄດ້ ເກີດຂຶ້ນ.
- ຊື່ ແລະ ຣາຍຣະອຽດການຕິດຕໍ່ຫາຂອງບຸກຄົນອື່ນໆຜູ້ທີ່ສາມາດເອົາ ຣາຍຣະອຽດໃຫ້ໄດ້ກ່ຽວກັບສະພາບການ.
- ວ່າທ່ານຮູ້ຈັກກ່ຽວກັບຄວາມຫ່ວງໃຍນຳຄວາມປອດພັຍແນວໃດແນວນຶ່ງຫລືບໍ່.

**ແມ່ນຫຍັງຈະເກີດຂຶ້ນຫລັງຈາກທີ່ຂ້າພະເຈົ້າລາຍງານແລ້ວ:**

- ການຢ້ຽມຢາມທີ່ບໍ່ຖືກແຈ້ງບອກຈະຖືກພະຍາຍາມນຳບຸກຄົນນັ້ນ.
- DSHS (APS) ຈະລາຍງານອາດສະຍາກັມທີ່ນ່າສົງສັຍໄປຫາເຈົ້າ ຫນ້າທີ່ ຕຳຣວດ.

**ມີຫຍັງອີກແດ່ທີ່ສຳຄັນທີ່ຄວນຈະຮູ້ຈັກ?**

- ຖ້າຫາກວ່າທ່ານລາຍງານດ້ວຍຄວາມຈິງໃຈ, ທ່ານຈະມີຄວາມລຸດພົ້ນຈາກຄວາມຮັບຜິດຊອບ.
- ຊື່ ແລະ ຣາຍຣະອຽດຂອງທ່ານກ່ຽວກັບຜູ້ໃຫຍ່ອ່ອນແອຢູ່ໃນອັນຕະລາຍໄດ້ງ່າຍໆຈະຖືກປົກປິດໄວ້ເປັນຄວາມລັບສ່ວນຕົວ (ການເປີດເຜີຍໃຫ້ສາທາຣະນະຊົນ ແລະ ກົດຣະບຽບຂອງຣັດ ແລະ ຣັດຖະບານອື່ນໆຈະກ່ຽວຂ້ອງນຳ) .
- ການລາຍງານສາມາດເປັນທີ່ນ່າສົງສັຍ ຫລື ສັງເກດເຫັນໄດ້. ທ່ານບໍ່ຕ້ອງໄດ້ພິສູດວ່າການກົດຂີ່ຂົ່ມເຫັງໄດ້ເກີດຂຶ້ນເມື່ອເວລາທຳການລາຍງານ.
- APS ບໍ່ສາມາດທີ່ຈະແລກປ່ຽນຂໍ້ຄວາມຂອງການສືບສວນໄດ້.

## ປະຊາຊົນຂອງຣັດວໍຊິງຕັນສາມາດເຮັດຫຍັງໄດ້ແດ່ເພື່ອຈະປ້ອງກັນຜູ້ໃຫຍ່ອ່ອນແອຢູ່ໃນອັນຕະລາຍໄດ້ງ່າຍໆຈາກການກົດຂີ່ຂົ່ມເຫັງ?

ສຸຂະພາບ ແລະ ຄວາມປອດພັຍແມ່ນຄວາມຮັບຜິດຊອບຂອງທຸກໆຄົນ.ທຸກໆຄົນມີບົດບາດທີ່ຈະປ້ອງກັນ ແລະ ລາຍງານການກົດຂີ່ຂົ່ມເຫັງນຳຜູ້ໃຫຍ່ອ່ອນແອຢູ່ໃນອັນຕະລາຍໄດ້ງ່າຍໆ. ການລາຍງານແມ່ນການປະສານງານຮ່ວມກັນ. APS ຫວັງເພິ່ງຄອບຄົວ, ຫມູ່ເພື່ອນ,ຄົນຂ້າງຄຽງ, ແລະ ສະມາຊິກຊຸມນຸມຊົນເພື່ອຈະລາຍງານການກົດຂີ່ຂົ່ມເຫັງ.

| | |
|---|---|
| **ຢ້ຽມຢາມ** | • ຮັກສາການຕິດຕໍ່ນຳຜູ້ໃຫຍ່ອ່ອນແອຢູ່ໃນອັນຕະລາຍໄດ້ງ່າຍໆຢູ່ໃນຄອບຄົວ ແລະ ຊຸມນຸມຊົນ.<br>• ແລກປ່ຽນຣາຍຣະອຽດການຕິດຕໍ່ນຳກັບ DSHS ແລະ ຮັບປະກັນອີກວ່າຄວາມຊ່ວຍເຫລືອສ່ວນບຸກຄົນຈະມີໄວ້ໃຫ້. |
| **ການຍົກສູງໃນຄວາມຮັບຮູ້** | • ເວົ້ານຳຄອບຄົວ ແລະ ຊຸມນຸມຊົນຂອງທ່ານກ່ຽວກັບ APS ແລະ ຈະລາຍງານການກົດຂີ່ຂົ່ມເຫັງໄດ້ແນວໃດ.<br>• ເຊີນເອົາ APS ທີ່ຈະແລກປ່ຽນຣາຍຣະອຽດຢູ່ໃນຊຸມນຸມຊົນຂອງທ່ານ. |
| **ການອຸ້ມຊູຜູ້ບໍຣິການຮັບໃຊ້** | • ຊຸກຍູ້ສົ່ງເສີມໃຫ້ຜູ້ເບິ່ງແຍງດູແລຂອງຜູ້ໃຫຍ່ອ່ອນແອຢູ່ໃນອັນຕະລາຍໄດ້ງ່າຍໆທີ່ຈະຝຶກຝົນການເບິ່ງແຍງບົວຣະບັດຕົນເອງ ແລະ ເອົາການພັກຜ່ອນທີ່ຈຳເປັນ ຫລື ການເບິ່ງແຍງຊົ່ວຄາວຈາກການເບິ່ງແຍງດູແລ. |
| **ລາຍງານ** | • ຢ່າສູ່ລົງຄວາມເຫັນຈັກເທື່ອວ່າຄົນໃດຄົນນຶ່ງອີກໄດ້ທຳການລາຍງານແລ້ວ.<br>• ຮັບຮູ້ເອົາສິ່ງເຕືອນບອກການກົດຂີ່ຂົ່ມເຫັງຜູ້ໃຫຍ່ ແລະ ລາຍງານໄປຫາ APS. |

## ແມ່ນໃຜເປັນຜູ້ລາຍງານທີ່ຕ້ອງໄດ້ເຮັດ ແລະ ສິ່ງທີ່ມັນຕ້ອງການ?

ຜູ້ລາຍງານທີ່ຕ້ອງໄດ້ເຮັດແມ່ນບຸກຄົນຜູ້ທີ່, ເນື່ອງເປັນຜົນອອກມາຂອງວິຊາຊີບ ຫລື ວຽກງານຂອງເຂົາເຈົ້າ, ແມ່ນຄ້າຍຄືກັນຫລາຍກວ່າທີ່ຈະກາຍເປັນຮູ້ຈັກດີກ່ຽວກັບການກົດຂີ່ຂົ່ມເຫັງຜູ້ໃຫຍ່ອ່ອນແອຢູ່ໃນອັນຕະລາຍໄດ້ງ່າຍໆ. ຜູ້ລາຍງານທີ່ຕ້ອງໄດ້ເຮັດໄດ້ຖືກບັງໃຫ້ລາຍງານການກົດຂີ່ຂົ່ມເຫັງ; ມັນເປັນກົດຫມາຍ Washington State Law RCW 74.34.020. ຜູ້ລາຍງານທີ່ຕ້ອງໄດ້ເຮັດບາງຄົນລວມເອົາ ພະນັກງານຂອງກົມ DSHS, ຜູ້ບໍຣິການສ່ວນບຸກຄົນ, ເຈົ້າຫນ້າທີ່ຕຳຣວດ, ຜູ້ຊ່ຽວຊານການແພດ, ແລະ ພະນັກງານສັງຄົມ.

- ຢູ່ໃນຣັດວໍຊິງຕັນ, ຜູ້ລາຍງານທີ່ຕ້ອງໄດ້ເຮັດສາມາດຖືກປັບໄຫມລົງໂທດສຳລັບຄວາມຜິດພາດທີ່ຈະລາຍງານການກົດຂີ່ຂົ່ມເຫັງທີ່ນ່າສົງສັຍ [RCW 74.34.053].
- ລາຍງານໂດຍທັນທີໂລດຖ້າຫາກວ່າທ່ານມີ ເຫດຜົນທີ່ເຫມາະສົມ ທີ່ຈະເຊື່ອວ່າຜູ້ໃຫຍ່ອ່ອນແອເປັນອັນຕະລາຍໄດ້ງ່າຍໆກຳລັງຖືກ ທຳຮ້າຍ. ທ່ານບໍ່ຕ້ອງການຫລັກຖານຂອງການທຳຮ້າຍ [RCW 74.34.035].
- ລາຍງານ **ການທຳຮ້າຍຮ່າງກາຍ ຫລື ທາງເພດ** ທີ່ນ່າສົງສັຍໃຫ **ທັງ** ເຈົ້າຫນ້າທີ່ກົດຫມາຍ ແລະ ກົມ DSHS [RCW 74.34.035].
- ລາຍງານໂດຍທັນທີໂລດໄປຫາຜູ້ສົມມະສູດພິກສົບ ຫລື ຜູ້ກວດກາ ພະຍາບານ, ເຈົ້າຫນ້າທີ່ຕຳຣວດ ແລະ ກົມ DSHS ຖ້າຫາກວ່າ ທ່ານສົງສັຍວ່າການເສັຽຊີວິດໄດ້ຖືກກໍ່ມາຈາກການກົດຂີ່ຂົ່ມເຫັງ, ການປ່ອຍປະລະເລີຍ, ຫລື ການປະຖິ້ມ. [RCW 74.34.035] [RCW 68.50.020].

